1. **<u>ເຄື່ອງໝາຍຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສປປ ລາວ (LSC)</u>**

<u>ຄວາມໝາຍ:</u> ສື່ຄວາມໝາຍໃຫ້ເຫັນເຖິງ:

1. ຕົວອັກສອນສາກົນໂຕ “ L ” ມີເມັດຢູ່ລະຫວ່າງກາງ ຂອງຂອດລຸ່ມ ແລະ ຂອດເທິງ ແລະ ເປັນສີຄຳທັງໝົດ ໝາຍເຖິງ ຄວາມຮຸ່ງເຮືອງເຫຼືອງເຫຼື້ອມ ແລະ ການຄຸ້ມຄອງຕິດຕາມຕະຫຼາດທຶນຂອງ ສປປ ລາວ.
2. ຕົວອັກສອນສາກົນໂຕ “ a ” ເປັນສີແດງ ໝາຍເຖິງ ຄວາມເຂັ້ມແຂງຂອງຕະຫຼາດທຶນຂອງ ສປປ ລາວ.
3. ຕົວອັກສອນສາກົນໂຕ “ o ” ເປັນສີຟ້າ ໝາຍເຖິງ ຄວາມອຸດົມສົມບູນຂອງຕະຫຼາດທຶນຂອງ ສປປ ລາວ.
4. ຊຶ່ງສາມາດອ່ານອອກສຽງເປັນ “ Lao ” ແລະ ມີຕົວໜັງສືຢູ່ຂ້າງລຸ່ມ ເປັນພາສາລາວ ຂຽນວ່າ “ຄະນະກຳມະການຄຸ້ມຄອງຫຼັກຊັບ” ແລະ ເປັນພາສາອັງກິດຂຽນວ່າ “ Lao Securities Commission ”.

## 2. <u>ເຄື່ອງໝາຍຂອງ ສໍານັກງານຄະນະກໍາມະການກໍາກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໄທ (SEC)</u>

<u>ຄວາມໝາຍ:</u> ສື່ຄວາມໝາຍໃຫ້ເຫັນເຖິງ:

1. **ຕົວອັກສອນສີຟ້າ** ໝາຍເຖິງ ການສື່ຄວາມໝາຍເປັນສະຖາບັນຂອງຊາດທີ່ເປັນເສົາຫຼັກໃນການຄໍ້າຈູນເສດຖະກິດ ຊຶ່ງທຸກພາກສ່ວນເຊື່ອໝັ້ນ ແລະ ເຄົາລົບ.
2. **ເສັ້ນຊື່ສີຂຽວເຂັ້ມ** ໝາຍເຖິງ ການສື່ຄວາມໝາຍເຖິງການກໍາກັບດູແລຢ່າງສັດຊື່ບໍລິສຸດ ຮັກສາໄວ້ເຖິງຄວາມເທົ່າທຽມ ແລະ ບັນທັດຖານທີ່ດີ.
3. **ເສັ້ນໂຄ້ງສີຂຽວອ່ອນອ້ອມວົງມົນ** ໝາຍເຖິງ ການສື່ຄວາມໝາຍເຖິງການຮັບຟັງ ແລະ ຮ່ວມມືກັບທຸກພາກສ່ວນ ໃນການພັດທະນາໃຫ້ຕະຫຼາດທຶນເຂັ້ມແຂງ ແລະ ແຂ່ງຂັນໄດ້ໃນລະດັບສາກົນ.

3. <u>ເຄື່ອງໝາຍຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງຊາດ ຫວຽດນາມ (SSC)</u>

SSC State Securities Commission of Vietnam

<u>ຄວາມໝາຍ:</u> ເຄື່ອງໝາຍໃໝ່ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງຊາດຫວຽດນາມ ໄດ້ຮັບການອອກແບບໃຫ້ເປັນຮູບແບບສີ່ຫຼ່ຽມຈະຕຸລັດ ທີ່ທັນສະໄໝ ແລະ ມີລາຍລະອຽດທີ່ລຽບງ່າຍ ສື່ຄວາມໝາຍໃຫ້ເຫັນເຖິງ **"ການສະແດງອອກທີ່ເຊື່ອມຕໍ່ເຖິງ ຄວາມສາມັກຄີ, ຄວາມຄ່ອງໂຕ ແລະ ການພັດທະນາທີ່ຍືນຍົງ"**

1. **ຮູບສີ່ຫຼ່ຽມຈະຕຸລັດ** ໝາຍເຖິງ ຄວາມໝັ້ນຄົງ ແລະ ຍືນຍົງ ຂອງຕະຫຼາດຫຼັກຊັບ ລວມເຖິງ ຄວາມໝັ້ນໃຈໃນລະບົບການຈັດການ ແລະ ໂຄງສ້າງຂອງກົດໝາຍ;
2. **ຊ່ອງຫວ່າງແຈມູມເທິງເບື້ອງຂວາຂອງເຄື່ອງໝາຍ** ໝາຍເຖິງ ຄວາມຍືດຢຸ່ນຂອງລະບົບການບໍລິຫານຈັດການ ແລະ ໂຄງສ້າງຂອງກົດໝາຍ ຊຶ່ງໜ່ວຍງານບໍລິຫານ ຈະບໍ່ໃຊ້ເຄື່ອງມືອັນເຂັ້ມງວດເກີນໄປ ໂດຍຈະເນັ້ນກ່ຽວກັບການສ້າງວິທີການອັນໃໝ່ໆ ແລະ ຊ່ວຍກຳຈັດອຸປະສັກສຳລັບວິສາຫະກິດ;
3. **ຊ່ອງຫວ່າງແຈມູມເທິງເບື້ອງຂວາຂອງເຄື່ອງໝາຍ** ໝາຍເຖິງ ລູກສອນທີ່ເປັນເສັ້ນງ່ຽງມູມ 45 ອົງສາ ທີ່ສະແດງໃຫ້ເຫັນເຖິງການພັດທະນາ;
4. **ສີຂຽວ** ໝາຍເຖິງ ຄວາມສຳຄັນ ແລະ ຄວາມຮອບຄອບ ໃນການບໍລິຫານຈັດການ ແລະ ຍັງມີສີສັນທີ່ກ່ຽວຂ້ອງກັບການເຕີບໃຫຍ່ຂະຫຍາຍຕົວຂອງຕະຫຼາດຫຼັກຊັບ.

ທຸກລາຍລະອຽດຂອງເຄື່ອງໝາຍ ໄດ້ສ້າງຮູບລັກສະນະແບບຄົບວົງຈອນ ທີ່ສະແດງເຖິງການບໍລິຫານຈັດການຂອງລັດທີ່ໂປ່ງໃສ, ມີສະຖຽນລະພາບ ກ້າວໄປສູ່ການພັດທະນາຕະຫຼາດຫຼັກຊັບ.

4. <u>ເຄື່ອງໝາຍຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສປ.ຈີນ (CSRC)</u>

中国证监会

CSRC

<u>ຄວາມໝາຍ:</u> ສື່ຄວາມໝາຍໃຫ້ເຫັນເຖິງ: **"ຄວາມຕັ້ງໃຈ, ເອົາໃຈໃສ່ ແລະ ຫຼີກລ້ຽງການກະທຳທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຫຼື ບິດເບືອນພາບພົດສື່ສຽງ"**.

5. <u>ເຄື່ອງໝາຍຂອງ ຄະນະກໍາມະການຄຸ້ມຄອງຫຼັກຊັບ ສ.ອາເມລິກາ (SEC)</u>

<u>ຄວາມໝາຍ:</u> ສື່ຄວາມໝາຍໃຫ້ເຫັນເຖິງ: **“ການປົກປ້ອງນັກລົງທຶນ, ຮັກສາຄວາມຍຸຕິທໍາ, ຄວາມເປັນລະບຽບ ຮຽບຮ້ອຍ, ປະສິດທິພາບຂອງຕະຫຼາດ ແລະ ອໍານວຍຄວາມສະດວກໃຫ້ແກ່ວຽກງານການລະດົມທຶນ”.**

6. <u>ເຄື່ອງໝາຍຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ມາເລເຊຍ (SC Malaysia)</u>

**Suruhanjaya Sekuriti**
**Securities Comission**
**Malaysia**

<u>ຄວາມໝາຍ:</u> ສື່ຄວາມໝາຍໃຫ້ເຫັນເຖິງ: **“ການເສີມສ້າງສະພາບແວດລ້ອມສິ່ງອຳນວຍຄວາມສະດວກໃຫ້ມີຄວາມຫຼາກຫຼາຍ ແລະ ການຮ່ວມມືຊຶ່ງກໍ່ໃຫ້ ເກີດ ແລະ ປົກປ້ອງ ຊັບສິນ ແລະ ສ້າງຄຸນຄ່າໃຫ້ກັບທຸກຄົນ”.**

7. **ເຄື່ອງໝາຍຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຂອງ ສປປ ລາວ (LSC)**

<u>ຄວາມໝາຍ:</u> ການອອກແບບເຄື່ອງໝາຍ (Logo) ຂອງອົງການຄຸ້ມຄອງວຽກງານຫຼັກຊັບ ຂອງ ສປປ ລາວ (LSC) ຕ້ອງສື່ຄວາມໝາຍໃຫ້ເຫັນລັກສະນະ ດັ່ງນີ້:

1) **ສື່ຄວາມໝາຍໃຫ້ເຫັນເຖິງ ລັກສະນະຊາດ;**
2) **ສື່ຄວາມໝາຍໃຫ້ເຫັນເຖິງ ລັກສະນະສາກົນ;**
3) **ສື່ຄວາມໝາຍໃຫ້ເຫັນເຖິງ ພາລະບົດບາດຂອງ ຄຄຊ;**
4) **ສື່ຄວາມໝາຍໃຫ້ເຫັນເຖິງ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານຫຼັກຊັບ;**
5) **ສື່ຄວາມໝາຍໃຫ້ເຫັນເຖິງ ຄວາມໂປ່ງໃສ ແລະ ຍຸຕິທຳ;**
6) **ສື່ຄວາມໝາຍໃຫ້ເຫັນເຖິງ ລັກສະນະສົ່ງເສີມ ແລະ ພັດທະນາ.**